Washington State Department of Social & Health Services
Transforming lives

# ການຊ່ວຍເຫລືອເງິນ ຫລື ອາຫານ DSHS ຂອງທ່ານ
## Your DSHS Cash or Food Benefits

ຊື່ຂອງລູກຄ້າ (ຫົວຫນ້າຄອບຄົວ)

ເລກ ID ລູກຄ້າ

## ການຊ່ວຍເຫລືອເງິນສົດຂອງກົມ DSHS
## ເງິນ TANF, ອົພຍົບ, ເງິນສົດ ABD, ເງິນປ່ຽນຕໍ່ມາ

☐ **ຈຸດປະສົງ**

ກົມ DSHS ເອົາການຊ່ວຍເຫລືອເງິນສົດໃຫ້ແກ່ຜູ້ອາສັຍຢູ່ທີ່ມີຣາຍໄດ້ຕ່ຳຜູ້ທີ່ມີເງື່ອນໄຂໄດ້ຮັບໂຄງການຊ່ວຍເຫລືອຂອງຫລວງ.

ການຊ່ວຍເຫລືອເຫລົ່ານີ້ຊ່ວຍສຳລັບຣາຍຈ່າຍການດຳຣົງຊີວິດອັນຈຳເປັນ (RCW 74.04.770).

ການຊ່ວຍເຫລືອເງິນສົດ TANF ຕ້ອງຖືກໃຊ້ສຳລັບຜົນປະໂຍດຂອງເດັກນ້ອຍຢ່າງດຽວເທົ່ານັ້ນ. ພວກເຮົາສາມາດຂໍເອົາຫລັກຖານວ່າທ່ານໃຊ້ການຊ່ວຍເຫລືອເງິນສົດ TANF ຂອງທ່ານເພື່ອຈະເປັນຜົນປະໂຍດຂອງເດັກນ້ອຍ (RCW 74.12.260).

☐ **ການໃຊ້ທີ່ເຫມາະສົມ**

ທ່ານຈະໃຊ້ການຊ່ວຍເຫລືອເງິນສົດຂອງທ່ານສຳລັບຣາຍຈ່າຍຂອງການດຳຣົງຊີວິດເຊັ່ນວ່າ:

- ທີ່ຢູ່ອາສັຍ
- ນ້ຳມັນເຊື້ອເພີງ
- ອາຫານ
- ການຂົນສົ່ງໄປມາ
- ເຄື່ອງນຸ່ງ
- ການບົວຣະບັດຮັກສາສ້ອມແຊມເຮືອນ
- ການອະນາມັຍສ່ວນຕົວ
- ຣາຍຈ່າຍກ່ຽວກັບວຽກງານ

☐ **ການໃຊ້ທີ່ຜິດກົດຫມາຍ**

ພາຍໃຕ້ກົດຫມາຍ RCW 74.08.580, ມັນບໍ່ຖືກຕ້ອງຕາມກົດຫມາຍທີ່ຈະໃຊ້ບັດໂອນການຊ່ວຍເຫລືອທາງເອເລກໂຕຣນິກ (EBT) ຫລືເງິນສົດຈາກບັດ EBT ເພື່ອຈະ:

- ລິງການພະນັນ. ການພະນັນລວມເອົາບັດລໍເຕີຣີ, ເຈັ້ຽດິງ, ບັດເຈາະຮູ, ບິງໂກ, ການແຂ່ງມ້າ, ເກມກາຊີໂນ, ແລະ ເກມກິລາສ່ຽງໂຊກຕ່າງໆຕາມທີ່ຖືກພົບເຫັນຢູ່ໃນກົດຫມາຍ RCW 9.46, 67.16, ແລະ 67.70.
- ຊື້ເອົາການບໍຣິການຢູ່ຕາມຮ້ານສັກລາຍ, ຮ້ານບ່ອງຮູຮ່າງກາຍ,ຫລືຮ້ານສິລປະທາງຮ່າງກາຍ.
- ຊື້ເອົາຜະລິດທະພັນຢາກອກຫລືຢາເສັ້ນ.
- ຊື້ເອົາສິ່ງທີ່ເປັນເຫລົ້າ.
- ຊື້ເອົາສິນຄ້າ ຫລື ການບໍຣິການຢູ່ທີ່:
  - ຮ້ານນັ່ງກິນເຫລົ້າ.
  - ຮ້ານຂາຍເບັຽ ຫລື ວາຍນ໌ນອກຈາກວ່າໄດ້ຖືກອະນຸຍາດໃຫ້ເປັນຮ້ານຂາຍຍ່ອຍຂອງ SNAP ຫລື WIC.
  - ບາທ່ຽວກາງຄືນ.
  - ຫ້ອງການຮັບປະກັນແລກຄ່າໄຖ່ຕົວ.
  - ບ່ອນລິງການພະນັນ.
  - ບ່ອນຢ່ອນອາຣົມສຳລັບຜູ້ໃຫຍ່ທີ່ມີການສະແດງທີ່ມີສິ່ງທີ່ຢົວະຢວນ.
  - ບ່ອນຕ່າງໆທີ່ບຸກຄົນອາຍຸຕ່ຳກວ່າ 18 ປີບໍ່ຖືກອະນຸຍາດໃຫ້ເຂົ້າໄດ້.
    - ຕົວຢ່າງວ່າ, ຮ້ານຄ້າຍ່ອຍຂາຍກັນຊາບ່ອນທີ່ຂາຍກັນຊາ ແລະ/ຫລື ຜະລິດທະພັນທີ່ເຮັດດ້ວຍກັນຊາ.

## ການຊ່ວຍເຫລືອອາຫານຂອງກົມ DSHS

☐ **ຈຸດປະສົງ**

ໂຄງການຊ່ວຍເຫລືອອາຫານຂອງກົມ DSHS ລວມເອົາ:

- ໂຄງການອາຫານຈຳເປັນ.
- ໂຄງການອາຫານສຳລັບຄົນເຂົ້າເມືອງຖືກຕາມກົດຫມາຍ(FAP).
- ໂຄງການຄຳຮ້ອງລວມກັນຂອງຣັດວໍຊິງຕັນ (WASHCAP).
- ການຊ່ວຍເຫລືອອາຫານປ່ຽນຕໍ່ມາ (TFA).

ໂຄງການເຫລົ່ານີ້ເອົາການຊ່ວຍເຫລືອໃຫ້ແກ່ບຸກຄົນທີ່ມີຣາຍໄດ້ຕ່ຳເພື່ອຈະຊື້ເອົາອາຫານດ້ວຍບັດໂອນການຊ່ວຍເຫລືອທາງເອເລກໂຕຣນິກ (EBT).

☐ **ການໃຊ້ທີ່ເຫມາະສົມ**

ທ່ານ, ແລະ ສະມາຊິກຂອງຄອບຄົວທ່ານ, ຈະໃຊ້ການຊ່ວຍເຫລືອອາຫານຂອງທ່ານເພື່ອຈະຊື້ເອົາອາຫານຈາກຮ້ານຄ້າທີ່ຖືກອະນຸຍາດໃຫ້ໂດຍກົມ USDA, ຜະແນກອາຫານແລະເຄື່ອງບໍຣິໂພກ (FNS).

ທ່ານຈະໃຊ້ການຊ່ວຍເຫລືອຂອງທ່ານເພື່ອຈະຊື້ເອົາ:

- ເຂົ້າຈີ່ ແລະ ເຊຣີໂອ.
- ຫມາກໄມ້ ແລະ ຜັກ.
- ເນີຍ, ນ້ຳນົມ, ແລະ ຜະລິດທະພັນນ້ຳນົມອື່ນໆ.
- ຊີ້ນ, ປາ, ເປັດໄກ່, ແລະ ໄຂ່
- ອາຫານສ່ວນຫລາຍນອກຈາກອັນທີ່ໄດ້ຖືກເຮັດເປັນອາຫານຮ້ອນ.
- ແກ່ນໃນ ແລະ ພືດພັນທີ່ຜະລິດອາຫານອອກມາ.

☐ **ການໃຊ້ທີ່ຜິດກົດຫມາຍ**

ມັນຜິດກົດຫມາຍທີ່ຈະ:

- ໃຊ້ການຊ່ວຍເຫລືອອາຫານສຳລັບແນວໃດແນວນຶ່ງນອກຈາກຊື້ເອົາອາຫານສຳລັບສະມາຊິກຄອບຄົວຜູ້ທີ່ມີເງື່ອນໄຂໄດ້ຮັບ.
- ຂາຍ, ຫລື ພະຍາຍາມທີ່ຈະຂາຍ, ບັດ EBT ຂອງທ່ານ.
- ແລກປ່ຽນການຊ່ວຍເຫລືອຂອງທ່ານ, ຫລື ອາຫານທີ່ຖືກຊື້ເອົາດ້ວຍບັດ EBT ຂອງທ່ານ, ສຳລັບແນວໃດແນວນຶ່ງທີ່ມີຄຸນຄ່າ (ການຄ້າຂາຍຜິດກົດຫມາຍ). ຕົວຢ່າງຂອງການຄ້າຂາຍທີ່ບໍ່ຖືກຕ້ອງຕາມກົດຫມາຍລວມເອົາການແລກປ່ຽນການຊ່ວຍເຫລືອອາຫານເອົາເງິນສົດ,ຢາເສບຕິດ, ຫລື ອາວຸດ.
- ເອົາການຊ່ວຍເຫລືອຂອງທ່ານໃຫ້ຄົນໃດຄົນນຶ່ງຜູ້ທີ່ບໍ່ຢູ່ໃນຄອບຄົວທ່ານ.
- ໃຊ້ການຊ່ວຍເຫລືອອາຫານເພື່ອຈະຊື້ເອົາສິ່ງທີ່ບໍ່ແມ່ນອາຫານ. ຕົວຢ່າງລວມເອົາ ຢາກອກ, ຢາເສັ້ນ, ເຫລົ້າເບັຽ, ເຫລົ້າວາຍນ໌, ສຸຣາ, ເຄື່ອງໃຊ້ໃນຄອບຄົວ, ສະບູ, ຜະລິດທະພັນເຈັ້ຽ, ຢາໄວຕາມິນ, ຢາ, ຫລື ອາຫານສັດລ້ຽງ.
- ໃຊ້ການຊ່ວຍເຫລືອອາຫານຂອງທ່ານເພື່ອຈະຈ່າຍບັນຊີເຄຣດິດ.



Barcode label

14520

## ການຊ່ວຍເຫລືອເງິນສົດຂອງກົມ **DSHS**<br>ເງິນ **TANF,** ອົພຍົບ, ເງິນສົດ **ABD,** ເງິນປ່ຽນຕໍ່ມາ

☐ **ການປັບໄຫມລົງໂທດສຳລັບການໃຊ້ທີ່ຜິດກົດຫມາຍ**

ຖ້າຫາກວ່າທ່ານໃຊ້ບັດ EBT ຂອງທ່ານ ຫລື ເງິນສົດຈາກບັດ EBT ຂອງທ່ານຜິດຕໍ່ກົດຫມາຍ ຫລື ບໍ່ເຫມາະສົມ, ພວກເຮົາຈະ:

- ແຕ່ງຕັ້ງຜູ້ອອກຊື່ປ້ອງກັນເພື່ອຈະກຳກັບນຳການຊ່ວຍເຫລືອເງິນສົດຂອງທ່ານ.
- ຮ້ອງຂໍເອົາຫລັກຖານວ່າທ່ານໃຊ້ການຊ່ວຍເຫລືອຂອງທ່ານສຳລັບເດັກນ້ອຍຢູ່ໃນຄວາມດູແລຂອງທ່ານ.
- ຕັດການຊ່ວຍເຫລືອເງິນສົດຂອງທ່ານ.
- ດຳເນີນການກະທຳທາງກົດຫມາຍຕໍ່ໄປ, ລວມທັງການຕັດສິນລົງໂທດທາງອາດສະຍາກັມ.

☐ **ຄ່າທຳນຽມຂອງຈັກຝາກຖອນເງິນອັຕໂນມັດ (ATM) ສຳລັບການຖອນເງິນ EBT**

ເມື່ອທ່ານໃຊ້ບັດ EBT ຂອງທ່ານເພື່ອຈະທຳການຖອນເອົາເງິນສົດຢູ່ຕາມຈັກ ATM:

- ເຈົ້າຂອງຈັກ ATM ຫລື ທະນາຄານທີ່ແລ່ນຈັກອາດຈະເກັບເອົາຄ່າທຳນຽມເກັບເອົາຕື່ມ.
- ກົມບໍ່ຈ່າຍ ຫລື ໃຊ້ເງິນແທນຄືນສຳລັບຄ່າທຳນຽມເກັບເອົາຕື່ມ.
- ທ່ານຈະສາມາດຮັບເອົາເງິນຄືນຈາກຮ້ານຄ້າບາງບ່ອນໂດຍບໍ່ມີຄ່າທຳນຽມ.

## ການຊ່ວຍເຫລືອອາຫານຂອງກົມ **DSHS**

☐ **ການປັບໄຫມລົງໂທດສຳລັບການໃຊ້ທີ່ຜິດກົດຫມາຍ**

ຖ້າຫາກວ່າທ່ານໃຊ້ການຊ່ວຍເຫລືອອາຫານຂອງທ່ານໄປໃນທາງຜິດໂດຍເຈຕນາ, ທ່ານອາດຈະ:

- ຖືກກຳນົດໃຫ້ຈ່າຍຄືນການຊ່ວຍເຫລືອແລກປ່ຽນຜິດກົດຫມາຍຕ່າງໆ.
- ຖືກຫມົດສິດ ແລະ ສູນເສັຽການຊ່ວຍເຫລືອຂອງທ່ານ:
  - ເປັນເວລາຢ່າງຫນ້ອຍນຶ່ງປີ.
  - ຮອດເຖິງຕະລອດຊີວິດ.
  - ຖືກຫມົດສິດໄດ້ຮັບເຖິງແມ່ນວ່າທ່ານຈະຍ້າຍໄປຢູ່ຣັດອື່ນກໍຕາມ.
- ຈະຖືກປັບໄຫມ.
- ຈະຖືກຟ້ອງຮ້ອງຕາມກົດຫມາຍ, ລວມທັງການຕັດສິນລົງໂທດທາງອາດສະຍະກັມ.

  ກົມ DSHS ຈະຮ່ວມມືນຳເຈົ້າຫນ້າທີ່ພິພາກສາຂອງຣັດ, ທ້ອງຖິ່ນ, ແລະຣັດຖະບານກາງເພື່ອຈະຕັດສິນລົງໂທດການຄ້າຂາຍຜິດຕໍ່ກົດຫມາຍໃນການຊ່ວຍເຫລືອອາຫານ.

---

ໂດຍການເຊັນຊື່ຢູ່ຂ້າງລຸ່ມນີ້, ຂ້າພະເຈົ້າເຫັນພ້ອມວ່າການໃຊ້ທີ່ເຫມາະສົມ ແລະ ຖືກຕ້ອງຕາມກົດຫມາຍໃນການຊ່ວຍເຫລືອເງິນສົດ ແລະ ອາຫານຂອງກົມ DSHS ໄດ້ຖືກອະທິບາຍໃຫ້ຂ້າພະເຈົ້າຟັງ. ຂ້າພະເຈົ້າເຂົ້າໃຈການໃຊ້ການຊ່ວຍເຫລືອທີ່ເຫມາະສົມ ແລະ ການປັບໄຫມລົງໂທດສຳລັບການໃຊ້ຜິດຕໍ່ກົດຫມາຍ.
ຂ້າພະເຈົ້າເຂົ້າໃຈວ່າເງື່ອນໄຂຮັບເອົາການຊ່ວຍເຫລືອຂອງກົມ DSHS ຂອງຂ້າພະເຈົ້າຈະບໍ່ສະທ້ອນເຖິງຖ້າຫາກວ່າຂ້າພະເຈົ້າບໍ່ເຊັນຊື່ໃສ່ໃບຟອມໃບນີ້. ແມ່ນໃຜກໍຕາມຜູ້ທີ່ບໍ່ຍອມທີ່ຈະເຊັນຊື່ໃສ່ຟອມໃບນີ້ຍັງຈະຕ້ອງຖືກປັບໄຫມລົງໂທດຕາມໂຄງການ ຫລື ໂທດອາດສະຍະກັມສຳລັບການໃຊ້ການຊ່ວຍເຫລືອທີ່ຜິດຕໍ່ກົດຫມາຍ.

ຂ້າພະເຈົ້າເຂົ້າໃຈວ່າບັດ EBT ຂອງຂ້າພະເຈົ້າເອົາໃຫ້ກົມ DSHS ປະວັດຂອງການຖອນອອກຂອງຂ້າພະເຈົ້າ, ລວມທັງສະຖານທີ່ບ່ອນທີ່ຂ້າພະເຈົ້າໃຊ້ບັດຂອງຂ້າພະເຈົ້າ. ຂ້າພະເຈົ້າເຂົ້າໃຈວ່າກົມ DSHS ຈະໃຊ້ຣາຍຣະອຽດອັນນີ້, ແລະປະວັດຂອງຄຳຮ້ອງຂໍເອົາບັດໃຫມ່ແທນຂອງຂ້າພະເຈົ້າ, ເພື່ອຈະສືບສວນເບິ່ງການໃຊ້ໄປໃນທາງຜິດໃນການຊ່ວຍເຫລືອເງິນສົດ ຫລື ການຊ່ວຍເຫລືອອາຫານຂອງຂ້າພະເຈົ້າ.

| ລາຍເຊັນຂອງຜູ້ຮ້ອງຂໍ | ວັນທີ |
|---|---|
| | |

☐ ປະຕິເສດທີ່ຈະເຊັນຊື່; ເຊັນຊື່ນ້ອຍຂອງພະນັກງານ ____________________